ເພີ່ມທະວີການສ້າງລາຍຮັບຈາກທີ່ດິນ

ລາດຊະວົງ ບຸນສີພົມ
ຮອງຫົວໜ້າສະຖາບັນຄົ້ນຄ້ວານະ�โยบายเสดถะกิด-ສັງຄົມ, ສວສສຊ

ນັບຕັ້ງແຕ່ກອງປະຊຸມໃຫ່ຍຄັ້ງທີ IV ຂອງພັກເປັນຕົ້ນມາ ລັດຖະບານ ກໍ່ໄດ້ຈັດຕັ້ງຜັນຂະຫຍາຍມະຕິພັກ ປະຕິບັດແນວທາງນະໂຍບາຍປ່ຽນແປງໃໝ່ ໂດຍການເປີດກວ້າງນະ�โยบายการลงทุนทั้งภายใน ແລະ ຕ່າງປະເທດ ເລີ່ມແຕ່ຊຸມປີ 1988 ເປັນຕົ້ນມາ ການລົງທຶນໃນຂະແໜງຕ່າງໆກໍ່ມີອັດຕາສ່ວນເພີ່ມຂຶ້ນ ບັນດາ ການລົງທຶນເລົ່ານັ້ນ, ສ່ວນໃຫ່ຍແມ່ນຕິດພັນກັບການນຳໃຊ້ດິນ ເປັນຕົ້ນແມ່ນຂະແໜງການເຊັ່ນ: ຂະແໜງກະສິ ກຳ, ອຸດສາຫະກຳ, ພະລັງງານໄຟ້ານ້ຳຕົກ, ຂຸດຄົ້ນແຮ່ທາດ, ອະສັງຫາລິມະຊັບ, ການບໍລິການ... ເລົ່ານີ້ເປັນຕົ້ນ. ເຮັດໃຫ້ການນຳໃຊ້ດິນ ເຂົ້າໃນການຂັບເຄື່ອນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຂອງປະເທດນັບມື້ນັບສູງຂຶ້ນ. ແຕ່ພ້ອມດຽວກັນນັ້ນ, ລາຍຮັບຈາກການນຳໃຊ້ທີ່ດິນກໍ່ຍັງບໍ່ທັນສົມຄູ່ກັນກັບເນື້ອທີ່ດິນທີ່ຖືກນຳໃຊ້. ນິຕິກຳທີ່ ພົວພັນໃນວຽກງານການເກັບລາຍຮັບຈາກທີ່ດິນ ຫລາຍຈຸດກໍ່ຍັງບໍ່ທັນສອດຄ່ອງ ແລະ ໄປລ່ວງດຽວກັນ ດຳລັດວ່າ ດ້ວຍພາລະບົດບາດ ແລະ ການເຄື່ອນໄຫວຂອງບັນດາຂະແໜງການໃນວຽກງານນີ້ ມີການປັບປຸງ, ປ່ຽນແປງຫລາຍ ຄັ້ງ ການນຳໃຊ້ດິນ ຍັງບໍ່ທັນມີຈຸດສຸມ, ຂາດແຜນການນຳໃຊ້ແຕ່ລະປະເພດດິນໃນຂັ້ນຈຸລະພາກ ແລະ ການສ້າງ ລາຍຮັບຈາກທີ່ດິນ ກໍ່ຍັງບໍ່ທັນສູງ ຂາດການປະສານສົມທົບລະຫວ່າງຂະແໜງການພາກລັດດ້ວຍກັນຢ່າງກົມກຽວ, ຖານຂໍ້ມູນລະຫວ່າງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງການເງິນ ຍັງບໍ່ທັນໄດ້ຮັບ ການປັບປຸງໃຫ້ທັນເວລາ, ການຈັດເກັບລາຍຮັບໃນປະຈຸບັນກໍ່ຍັງບໍ່ທັນໄດ້ຮັບການປັບປຸງໃຫ້ສອດຄ່ອງກັບກົດໝ ายที่ดินที่มีอยู่ ເຮັດໃຫ້ການເກັບລາຍຮັບຈາກພາສີດທີ່ດິນ ບໍ່ເຕັມເມັດເຕັມໜ່ວຍ ເນື່ອງຈາກການເກັບລາຍຮັບ ພາສີທີ່ດິນຂອງກະຊວງການເງິນ ແມ່ນຕ້ອງອາໃສ່ຂໍ້ມູນຈາກຖານທີ່ຖືກຕ້ອງຈາກຂະແໜງຊັບພະຍາກອນທຳມະ ຊາດ ແລະ ສິ່ງແວດລ້ອມ ເຊິ່ງເປັນຜູ້ຮັບຜິດຊອບໃນການສ້າງ ແລະ ປັບປຸງຖານດັ່ງກ່າວ. ເພື່ອເຮັດໃຫ້ທີ່ດິນ ທີ່ ເປັນຊັບສົມບັດຂອງປະເທດຊາດ ສາມາດສ້າງເປັນລາຍຮັບທີ່ໝັ້ນຄົງ ໃຫ້ແກ່ລາຍຮັບແຫ່ງຊາດ ທັງເປັນການ ປະກອບສ່ວນສະໜັບສະໜັບເຂົ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດຂອງລັດຖະບານ ໃນການແກ້ໄຂຄວາມ ຫຍຸ້ງຍາກທາງດ້ານເສດຖະກິດ. ໂດຍເຫັນໄດ້ເຖິງຄວາມສຳຄັນດັ່ງທີ່ກ່າວມາຂ້າງເທິງນັ້ນ, ສະຖາບັນຄົ້ນຄວ້າ ນະ�โยบายเสดถะกิด-ສັງຄົມ, ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ ຈຶ່ງໄດ້ສຶກສາຄົ້ນຄວ້າ ທາງດ້ານນະ�โยบายในหัวข้อ"**ເພີ່ມທະວີການສ້າງລາຍຮັບຈາກທີ່ດິນ**" ໂດຍຕິດພັນກັບ 2 ຈຸດປະສົງຄື (1) ສຶກສາ ເຖິງນິຕິກຳ ແລະ ຂະແໜງການທີ່ກ່ຽວຂ້ອງກັບການເກັບລາຍຮັບຈາກທີ່ດິນ (2) ແຫລ່ງລາຍຮັບຈາກທີ່ດິນ ແລະ ການເພີ່ມທະວີເພື່ອເຮັດໃຫ້ລາຍຮັບຈາກທີ່ດິນເພີ່ມຂຶ້ນ ພ້ອມທັງຂໍ້ສະເໜີແນະດ້ານນະ�โยบายต่ำกับขะแหฺงการ ພາກລັດກ່ຽວຂ້ອງ ທີ່ມີບົດບາດໃນວຽກງານທີ່ດິນ.

1. ນິຕິກຳ ແລະ ຂະແໜງການທີ່ພົວພັນໃນວຽກງານການເກັບລາຍຮັບຈາກທີ່ດິນ.

ນິຕິກຳທີ່ພົວພັນໃນວຽກງານການເກັບລາຍຮັບຈາກທີ່ດິນ.

ໃນວຽກງານທີ່ດິນ ມີຫລາຍກົດໝາຍ, ນິຕິກຳລຸ່ມກົດໝາຍທີ່ກ່ຽວຂ້ອງພົວພັນ ແລະ ສະໜັບສະໜູນຫລາຍ

ສົມຄວນ ເປັນຕົ້ນແມ່ນ: ກົດໝາຍທີ່ດິນ 2019, ກົດໝາຍລົງທຶນ 2016, ກົດໝາຍວ່າດ້ວຍສະພາແຫ່ງຊາດ 2016, ກົດໝາຍວ່າດ້ວຍລັດຖະບານ 2017, ກົດໝາຍປ່າໄມ້, ກົດໝາຍກະສິກຳ, ກົດໝາຍຜັງເມືອງ ແລະ ກົດໝາຍອື່ນໆ....ທີ່ກ່ຽວຂ້ອງ. ນອກຈາກນີ້ຍັງມີນິຕິກຳລຸ່ມກົດໝາຍຫລາຍສະບັບທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ: ລັດຖະບັນຍັດຂອງປະທານປະເທດ ເລກທີ 01/ສປປ 8/5/2007ວ່າດ້ວຍພາສີທີ່ດິນ; ເລກທີ (03/ປປທ 2008;003/ ປປທ 2012;002/ປປທ 2021) ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ; ເລກທີ 02/ປປທ18/11/2009 ວ່າ ດ້ວຍອັດຕາຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດ; ດຳລັດ ສະບັບເລກທີ 600/ນຍ ລົງວັນທີ 14/10/2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ; ດຳລັດສະບັບເລກທີ 451/ນຍ 2019 ວ່າດ້ວຍ ການເຄື່ອນໄຫວ ແລະ ພາລະບົດບາດຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ດຳລັດເລກທີ 05/ນຍ ລົງວັນ 5/1/2018 ວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມ ຄອງການລົງທຶນ....ແລະ ດຳລັດອື່ນໆທີ່ກ່ຽວຂ້ອງ.

ບັນດາຂະແໜງການທີ່ມີບົດບາດໃນການສ້າງ ແລະ ເກັບລາຍຮັບຈາກທີ່ດິນ.

ໃນການເກັບລາຍຮັບຈາກທີ່ດິນ ແມ່ນມີສອງພາກສ່ວນທີ່ສຳຄັນຄື: ຂະແໜງການຫລັກ ແລະ ຂະແໜງການສະ ໜັບສະໜູນປົ່ນອ້ອມ.

ຂະແໜງການຫລັກ: ໃນການຈັດເກັບລາຍຮັບຈາກທີ່ດິນທັງໝົດໃນປະຈຸບັນແມ່ນກະຊວງການເງິນ ເຊິ່ງເຮັດ ຫນ້າທີ່ໃນການເກັບລາຍຮັບເຂົ້າງົບປະມານແຫ່ງຊາດຢ່າງລວມສູນ.

ຂະແໜງການສະໜັບສະໜູນປົ່ນອ້ອມ: ໃນຂະແໜງການນີ້ ແມ່ນປະກອບມີຫລາຍກະຊວງທີ່ຕິດພັນໃນວຽກ ດັ່ງກ່າວ ເປັນຕົ້ນແມ່ນ: ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຮັດໜ້າທີ່ໃນການອອກໃບຕາດິນ, ສ້າງຖານຂໍ້ມູນດ້ານທີ່ດິນ....; ກະຊວງກະສິກຳ ແລະ ປ່າໄມ້ ຄຸ້ມຄອງການນຳໃຊ້ດິນກະສິກຳ, ຂຶ້ນສະໂນດທີ່ດິນ...; ກະຊວງພະລັງງານ ແລະ ບໍ່ແຮ່ ແມ່ນຕິດພັນກັບການນຳໃຊ້ດິນສ້າງເຂື່ອນ ແລະ ຂຸດຄົ້ນບໍ່ແຮ່, ກະຊວງໂຍທາທິການ ແລະ ຂົນສົ່ງ ແມ່ນຕິດພັນກັບການກຳນົດຝັງເມືອງ, ການອະນຸຍາດປຸກສ້າງ ແລະ ດິນຄົມມະນາຄົມ; ຄະນະ ກຳມະການຄຸ້ມຄອງການລົງທຶນ ອະນຸຍາດເຊົ່າ ແລະ ສຳປະທານດິນລັດ ແລະ ກະຊວງອື່ນໆທີ່ກ່ຽວຂ້ອງ ..... ທີ່ ເຮັດໜ້າທີ່ສະໜັບສະໜູນ ແລະ ປົ່ນອ້ອມ ໃນການສ້າງແຜນພັດທະນາ, ຈັດສັນ, ຄຸ້ມຄອງ ແລະ ນຳໃຊ້ດິນ ເຂົ້າໃນ ການດຳເນີນທຸລະກິດ ແລະ ອື່ນໆ ທີ່ເປັນການສ້າງລາຍຮັບຈາກທີ່ດິນ

ຮູບສະແດງ: ບັນດາກະຊວງ, ຂະແໜງການທີ່ພົວພັນກັນການເກັບລາຍຮັບຈາກທີ່ດິນ



2. ລາຍຮັບຈາກທີ່ດິນ ແລະ ວິທີການເພີ່ມທະວີເພື່ອເຮັດໃຫ້ລາຍຮັບຈາກທີ່ດິນເພີ່ມຂຶ້ນ.

ລາຍຮັບຈາກທີ່ດິນ ທີ່ພວກເຮົາເຫັນໄດ້ໃນປະຈຸບັນ ແມ່ນມີຫລາຍແຫລ່ງທີ່ແຕກຕ່າງກັນ ບາງແຫລ່ງກໍ່ບໍ່ທັນສາມາດຈັດເກັບໄດ້ຢ່າງໝັ້ນຄົງ ແລະ ປົກກະຕິ ດັ່ງນັ້ນຈຶ່ງສົງລວມເອົາແຫລ່ງລາຍຮັບທີ່ລັດຖະບານສາມາດຈັບເກັບເຂົ້າງົບປະມານແຫ່ງຊາດຢ່າງເປັນປົກກະຕິ ເຊິ່ງປະກອບມີ 5 ແຫລ່ງຄື:1. ພາສີທີ່ດິນ;2. ໂອນກຳມະສິດທີ່ດິນ (ການຊື້-ຂາຍດິນ); 3. ລາຍຮັບຈາກການຫັນປ່ຽນປະເພດດິນ; 4. ຈາກຄ່າເຊົ່າ ແລະ ສຳປະທານທີ່ດິນ; 5. ລາຍຮັບຈາກຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປັບໄໝກ່ຽວກັບທີ່ດິນ.

 # ລາຍຮັບຈາກການເກັບພາສີທີ່ດິນ:

ເປັນແຫລ່ງລາຍຮັບຮູບແບບທຳອິດ ທີ່ລັດຖະບານ ສາມາດພັດທະນາເປັນການຈັດເກັບດ້ວຍລະບົບທີ່ທັນສະໄຫມ ທຽບໃສ່ປະເພດແຫລ່ງລາຍຮັບອື່ນໆຈາກທີ່ດິນ. ການເກັບລາຍຮັບໃນແຫລ່ງນີ້ ລັດຖະບານແມ່ນໄດ້ເກັບລາຍຮັບຈາກ 2 ປະເພດດິນເທົ່ານັ້ນ: **ດິນປຸກສ້າງ ແລະ ດິນກະສິກຳ** (**ເອກະສານຊ້ອນທ້າຍ 6**) ແລະ ໃນ 2 ປະເພດດິນນີ້, ກໍ່ຍັງບໍ່ສາມາດເກັບໄດ້ເຕັມເມັດເຕັມໜ່ວຍຕາມອັດຕາ ແລະ ຈຸດປະສົງຂອງການນຳໃຊ້ດິນ ທີ່ນອນໃນລັດຖະບັນຍັດ ເລກທີ 01/ປປທ ລົງວັນທີ 8/5/2007 ວ່າດ້ວຍພາສີດິນ. ໃນລັດຖະບັນຍັດນີ້ ໄດ້ແຍກອອກເປັນອັນລະອຽດຂອງແຕ່ລະຈຸດປະສົງນຳໃຊ້ຄື: **ດິນປຸກສ້າງ** ປະກອບມີ: (1.ດິນທີ່ຢູ່ອາໃສ, 2.ດິນປຸກສ້າງໂຮງງານ/ເຂດອຸດສາຫະກຳ, 3.ດິນປຸກສ້າງຮ້ານຄ້າ/ສະຖານທີ່ບໍລິການ ແລະ 4.ດິນເປົ່າຫວ່າງ ຫລື ດິນບໍ່ພັດທະນາ) ແລະ **ດິນກະສິກຳ** ກໍ່ມີແຕ່ລະຈຸດປະສົງໄດ້ລະບຸຢ່າງລະອຽດຈະແຈ້ງໃນລັດຖະບັນຍັດແລ້ວ (**ເອກະສານຊ້ອນທ້າຍ 1 ແລະ 2**). ໃນໄລຍະຜ່ານມາເຖິງຈະມີລັດຖະບັນຍັດວ່າດ້ວຍກົດໝາຍທີ່ດິນກໍ່ຕາມ ແຕ່ການເກັບລາຍຮັບພາສີດິນກໍ່ບໍ່ ໄປຕາມກົດໝາຍດັ່ງກ່າວ: ເນື່ອງຈາກຖານຂໍ້ ມູນລະຫວ່າງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງການເງິນ ກໍ່ຍັງບໍ່ກົງກັນ ແລະ ບໍ່ໄດ້ແຍກລະອຽດຂອງຈຸດປະສົງນຳໃຊ້ດິນ ຢູ່ໃນຖານເກັບລາຍຮັບດັ່ງກ່າວ. ໃນ 4 ຈຸດປະສົງໃນມາດຕາ 2 ຂອງລັດຖະບັດຍັດ 01 ຂອງພາສີທີ່ດິນ ຜ່ານມາລັດສາມາດເກັບໄດ້ປົກກະຕິຈາກຈຸດປະສົງທີ 1 ເທົ່າ, ສ່ວນຈຸດປະສົງທີ 2,3,4 ເກັບໄດ້ໜ້ອຍ ເນື່ອງຈາກ 3 ຈຸດປະສົ່ງດັ່ງກ່າວມີການປ່ຽນແປງການນຳໃຊ້ຢູ່ຕະຫລອດເວລາ. ປະຈຸບັນນີ້, ຂະແໜງການທີ່ກ່ຽວຂ້ອງກໍ່ໄດ້ປັບປຸງຖານຂໍ້ມູນ ເພື່ອແຍກເກັບຕາມຈຸດປະສົງການນຳໃຊ້ດິນ ແລະ ສາມາດເລີ່ມປະຕິບັດໄດ້ໃນຈຸດປະສົງທີ 1 ແລະ 4 ແຕ່ຈຸດປະສົງທີ 2 ແລະ 3 ກໍ່ຍັງບໍ່ສາມາດເກັບໃນລະບົບທີ່ທັນສະໄຫມໄດ້ ຍ້ອນມີການປ່ຽນແປງການນຳໃຊ້ທີ່ດິນ ແລະ ຕ້ອງອາໃສເຈົ້າຂອງດິນເພື່ອມາແຈ້ງການປ່ຽນແປງຈຸດປະສົງເອງ.

ວິທີການເພີ່ມທະວີການເກັບລາຍຮັບຈາກແຫລ່ງພາສີທີ່ດິນ

ເພື່ອເຮັດໃຫ້ລາຍຮັບຈາກທີ່ດິນໃນແຫລ່ງນີ້ເພີ່ມຂຶ້ນ, ສອດຄ່ອງກັບແນວທາງນະ�โยบาย, ນິຕິກຳ ແລະ ກົດໝາຍທີ່ມີຢູ່. ລັດຖະບານຕ້ອງໄດ້ປັບປຸງນິຕິກຳທີ່ພົວພັນກັບການຈັດເກັບລາຍຮັບຈາກພາສີທີ່ດິນ ເປັນຕົ້ນແມ່ນ: ລັດຖະບັນຍັດ ເລກທີ 01/ປປທ ລົງວັນທີ 8/5/2007 ວ່າດ້ວຍພາສີດິນ ເຫັນວ່າໄດ້ນຳໃຊ້ເປັນມາເປັນເວລາດົນສົມຄວນ, ຫລາຍເນື້ອໃນ, ອັດຕາການເກັບລາຍຮັບ ແມ່ນຈຳເປັນຕ້ອງໄດ້ຮັບການປັບປຸງໃຫ້ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ ແລະ ແທດເໝາະກັບໄລຍະປະຈຸບັນເປັນຕົ້ນແມ່ນກົດໝາຍທີ່ດິນສະບັບປັບປຸງ 2019 ເຊິ່ງໄດ້ກຳນົດ 8 ປະເພດທີ່ດິນ, ກົດໝາຍປ່າໄມ້ ປີ 2019 ທີ່ກຳນົດໃນ 3 ປະເພດປ່າ ແລະ ມະຕິສະພາແຫ່ງຊາດເລກທີ 098/ສພຊ ລົງວັນທີ 28/6/2018 ວ່າດ້ວຍແຜນແມ່ບົດຈັດສັນທີ່ດິນ ທີ່ໄດ້ກຳນົດການນຳໃຊ້ເນື້ອທີ່ດິນແຕ່ລະປະເພດ.... ສະນັ້ນ, ຕ້ອງປັບປຸງລັດຖະບັນຍັດວ່າດ້ວຍພາສີທີ່ດິນປີ 2007 ຄືນແມ່ນໃຫ້ຈັດເກັບໃຫ້ຖືກກັບ 8 ປະເພດທີ່ດິນ (1.ດິນກະສິກຳ; 2. ດິນປ່າໄມ້;3. ດິນບໍລິເວນນ້ຳ; 4. ດິນອຸດສາຫະກຳ; 5 ດິນຄົມມະນາຄົມ; 6.

ດິນວັດທະນະທຳ;7. ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ 8. ດິນປຸກສ້າງ) ແລະ ກຳນົດຈຸດປະສົງຂອງການນຳໃຊ້ດິນ, ອັດຕາເກັບຄືນໃຫ່ມ ແລະ ໃຫ້ລະອຽດຊັດເຈນ **ຕົວຢ່າງເກັບຈັດເກັບລາຍຮັບໃນປະເພດດິນປຸກສ້າງ**: ໃນປະເພດດິນປຸກສ້າງແມ່ນມີ 4 ຈຸດປະສົງການນຳໃຊ້ການນຳໃຊ້, ມີການກຳນົດອັດຕາເກັບຄັນແນ່ ແລະ ກຳນົດຕາມເຂດພື້ນທີ່ຢ່າງຈະແຈ້ງໃນມາດຕາ 4 ຂອງລັດຖະບັນຍັດ ເລກທີ 01/ສປປ ລົງວັນທີ 8/5/2007 ວ່າດ້ວຍພາສີທີ່ດິນ. ແຕ່ໃນການເກັບຕົວຈິງຜ່ານມາສາມາດເກັບໄດ້ເປັນປົກກະຕິໃນຈຸດປະສົງທີ 1 ແລະ 4 ຂອງການນຳໃຊ້ທີ່ດິນ ແລະ ລັດຖະບານ ສາມາດພັດທະນາຮູບແບບຈັດເກັບເປັນລະບົບທັນສະໄໝ. ສ່ວນຈຸດປະສົງ 2 ແລະ 3 ເຫັນວ່າມີການປ່ຽນແປງການນຳໃຊ້ດິນຢູ່ຕະຫລອດເວລາ, ບໍ່ສາມາດຄາດຄະເນໄດ້ ແລະ ການຈັດເກັບໃຫ້ຖືກຕ້ອງຕາມຈຸດປະສົງແມ່ນມີຄວາມຫຍຸ້ງຍາກສົມຄວນ. ແຕ່ຈາກການທົບທວນນິຕິກຳທີ່ກ່ຽວຂ້ອງເຫັນວ່າ: ລັດຖະບານ ສາມາດຈັດເກັບພາສີທີ່ດິນໄດ້ ເນື່ອງຈາກຈຸດປະສົງ 2 ແລະ 3 ຕິດພັນກັບການດຳເນີນທຸລະກິດ. ດັ່ງນັ້ນ, ລັດຖະບານ ຕ້ອງເກັບພາສີດິນໃນຈຸດປະສົງທີ 2 ແລະ 3 ບວກໃສ່ໃນໃບອະນຸຍາດດຳເນີນທຸລະກິດ, ກິດຈະການນັ້ນເລີຍ ແຕ່ເມື່ອທຸລະກິດຢຸດກິດຈະການ ຫລື ຍຸບເລີກ ເຈົ້າຂອງກິດຈະການຕ້ອງແຈ້ງ ເພື່ອໃຫ້ການເກັບພາສີໃນສອງຈຸດປະສົງດັ່ງກ່າວກໍ່ຈະປ່ຽນໄປເກັບຕາມຈຸດປະສົງການນຳໃຊ້ອື່ນ ໃນຄະນະດຽວກັນກໍ່ຈະເຮັດໃຫ້ລາຍຮັບຈາກພາສີດິນເພີ່ມຂຶ້ນອີກທາງໜຶ່ງ. ສຳລັບດິນກະສິກຳ ລັດຖະບານ ຕ້ອງໄດ້ທົບທວນ ແລະ ປັບປຸງຄືນຄ້າຍຄືກັບດິນກະສິກຳ ເປັນຕົ້ນແມ່ນຈຸດປະສົງການນຳໃຊ້, ຮູບແບບ, ອັດຕາການເກັບພາສີທີ່ດິນກະສິກຳຄືນໃຫ່ມ ໃຫ້ເໝາະສົມກັບສະພາບປະຈຸບັນຄືກັນກັບທີ່ໄດ້ສະເໜີປັບປຸງດິນປຸກສ້າງ ແລະ ຕ້ອງເອົາໃຈໃສ່ຕໍ່ກັບດິນກະສິກຳເປົ່າຫວ່າງ ເຊິ່ງເປັນຂອດຈຳກັດຕໍ່ການພັດທະນາ ເນື່ອງຈາກດິນກະສິກຳ ແມ່ນມີເນື້ອທີ່ກວ້າງໃຫ່ຍຖ້າທຽບໃສ່ດິນປຸກສ້າງ. ເພື່ອເຮັດໃຫ້ລາຍຮັບຈາກດິນກະສິກຳເພີ່ມຂຶ້ນ ທັງເປັນການແກ້ໄຂ ແລະ ສົ່ງເສີມການນຳໃຊ້ດິນກະສິກຳເປົ່າຫວ່າງໃຫ້ມີປະສິດທິພາບເພີ່ມຂຶ້ນ ຕ້ອງໄດ້ປັບປຸງຮູບແບບ ແລະ ອັດຕາການເກັບຄືນໃໝ່ ດ້ວຍການປ່ຽນຈາກການເກັບເປັນຕາແມັດຕໍ່ປີທີ່ລະບຸໃນລັດຖະບັນຍັດ 01 ວ່າດ້ວຍພາສີດິນ ມາເກັບເປັນຕາແມັດຕໍ່ປີ (ດິນກະສິກຳເປົ່າຫວ່າງ) ທັງເປັນການຊ່ວຍຫລຸດຜ່ອນການຈັບຈ່ອງດິນ, ການຖ່າງປ່າແບບຊະຊາຍ, ການຊື້ດິນທ້ອນໄວ້ເກນກຳໄລ. ສ່ວນດິນກະສິກຳທີ່ນຳໃຊ້ເຂົ້າໃນການຜະລິດ ແລະ ສ້າງມູນຄ່າເພີ່ມ ແມ່ນຮັກສາຮູບແບບ ແລະ ອັດຕາການເກັບໄວ້ຄືເກົ່າ ເປັນຕົ້ນແມ່ນຮັກສາການເກັບເປັນເຮັດຕາຕໍ່ປີໄວ້ຄືເກົ່າເພື່ອເປັນການສົ່ງເສີມການຜະລິດ ແລະ ພັດທະນາໃຫ້ກ້າວໄປສູ່ການເກັບໃນລະບົບທັນສະໄຫມໃນ 8 ປະເພດດິນ.

 # ລາຍຮັບຈາກການໂອນກຳມະສິດທີ່ດິນ (ການຊື້-ຂາຍດິນ) :

ອາກອນຈາກການໂອນກຳມະສິດທີ່ດິນ (ອາກອນຈາກການຊື້-ຂາຍດິນ) ກໍ່ແມ່ນອີກແຫລ່ງລາຍຮັບໜຶ່ງຈາກທີ່ດິນ ເຊິ່ງມີອັດຕາກຳນົດໃນລະບຽບການເກັບແມ່ນ 3% ຈາກການໂອນກຳມະສິດ (ຊື້-ຂາຍດິນ). ການຊື້ຂາຍດິນຂອງປະຊາຊົນ ມີສອງຮູບແບບດ້ວຍກັນຄື: ການຊື້ຂາຍແບບຖາວອນ ແລະ ການຊື້ຂາຍແບບຊົ່ວຄາວ. **ການຊື້ຂາຍດິນແບບຖາວອນ** ລັດ ສາມາດເກັບອາກອນດັ່ງກ່າວໄດ້ປົກກະຕິ ປະຊາຊົນດຳເນີນການໂອນກຳມະສິດປ່ຽນໃບຕາດິນໃໝ່ອອກຂອງຜູ້ຊື້ຖາວອນ. ອາກອນດັ່ງກ່າວ, ມອບເຂົ້າກະຊວງການເງິນ 2% ແລະ 1% ແມ່ນຂະແໜງທີ່ດິນຫັກໄວ້ເພື່ອນຳໃຊ້ໃນວຽກງານທີ່ດິນ. **ການຊື້-ຂາຍດິນແບບຊົ່ວຄາວ** ແມ່ນມີລັກສະນະຊື້ເພື່ອຂາຍຕໍ່ ຫລື ຊື້ຮັກສາໄວເພື່ອເກງກຳໄລດິນໃນອະນາຄົດ ໂດຍທີ່ຜູ້ຊື້ບໍ່ໄດ້ໂອນກຳມະສິດຈາກໃບຕາດິນເດີມ ມາເປັນໃບຕາດິນໃໝ່ທີ່ອອກຊື່ຂອງຜູ້ຊື້ແຕ່ຢ່າງໃດ. ຜູ້ຊື້ ແມ່ນຍັງຮັກສາໃບຕາດິນຂອງເຈົ້າຂອງເດີມໄວ້ ແຕ່ເຮັດໃບຢັ້ງຢືນການຊື້-ຂາຍຈາກອຳນາດການປົກຄອງບ້ານ ເພື່ອເປັນລັກຖານຂອງການຊື້-ຂາຍ, ໃບຢັ້ງຢືນການຊື້-ຂາຍ ດັ່ງກ່າວກໍ່ບໍ່ໄດ້ກຳນົດກອບເວລາອາຍຸການ ເຮັດໃຫ້ລັດຖະບານ ບໍ່ສາມາດເກັບອາກອນຈາກກໍລະນີແບບນີ້ໄດ້ ຈົນກວ່າຜູ້ຊື້ໂອນກຳມະສິດຖາວອນ. ຊ່ອງຫວ່າງນີ້, ກາຍເປັນເງື່ອນໄຂໃຫ້ຜູ້ທີ່ປະກອບການອາຊີບ ຊື້-ຂາຍດິນ ເພື່ອຂາຍຕໍ່ ຫລື

ເກງກຳໄລດິນ ສາມາດຫລີກລ້ຽງພັນທະອາກອນ ພ້ອມດຽວກັນນີ້, ບາງກໍລະນີ ດິນຕອນດຽວ ຖືກຊື້ຂາຍກັນເກີນກວ່າ 2 ຄັ້ງ/ປີກໍ່ມີ ເຊິ່ງແຕ່ລະຄັ້ງ ລັດຖະບານກໍ່ບໍ່ມາດມາເກັບອາກອນໄດ້ເລີຍ.

ວິທີການເພີ່ມທະວີການເກັບລາຍຮັບຈາກການໂອນລອຍກຳມະສິດ.

ເພື່ອເຮັດໃຫ້ການຊື້-ຂາຍດິນ ແບບຊົ່ວຄາວ ທີ່ລັດບໍ່ສາມາດຈັດເກັບອາກອນໄດ້ນັ້ນ ຈາກການສຶກສາ, ທົບທວນນິຕິກຳ ແລະ ແລກປ່ຽນຄຳຄິດຄຳເຫັນຈາກພາກສ່ວນທີ່ກ່ຽວຂ້ອງເຫັນວ່າ: ລັດຖະບານ ຄວນເບິ່ງໃນ3ຈຸດຄື: 1) ຫລຸດອັດຕາອາກອນໂອນກຳມະສິດລົງ, 2) ຖ້າດິນຕອນໃນມີການຊື້ຂາຍໂດຍບໍ່ໂອນກຳມະສິດ ກໍ່ເກັບຄ່າທຳນຽມຈາກໃບຢັ້ງຢືນການຊື້ຂາຍດິນ,3) ກຳນົດອາຍຸຂອງໜັງສືຢັ້ງຢືນຊື້ຂາຍຈາກອຳນາດການປົກຄອງບ້ານ ໃຫ້ມີກຳນົດບໍ່ເກີນໜຶ່ງປີ. ກໍ່ຈະເຮັດໃຫ້ຊ່ອງຫວ່າງການຫລີກລ້ຽງອາກອນໂອນກຳມະສິດຫລຸດລົງ. ພ້ອມກັນນີ້, ລັດຖະບານຈະຕ້ອງຫັນການເກັບລາຍຮັບຈາກແຫລ່ງນີ້ໃຫ້ມີລັກສະນະລວມສູນ ແລະ ຮູບແບບທັນສະໄໝຄືກັນກັບການເກັບພາສີທີ່ດິນ ເພື່ອບໍ່ໃຫ້ລາຍຮັບຕົກເຮ່ຍ.

 # ລາຍຮັບຈາກການຫັນປ່ຽນປະເພດດິນ:

ການຫັນປ່ຽນປະເພດດິນ ແມ່ນແຫລ່ງລາຍຮັບໜຶ່ງທີ່ສຳຄັນ ແລະ ມະຫາສານຈາກທີ່ດິນ ຈາກການທົບທວນລັດຖະບັນຍັດ ເລກທີ 03/ປປທ ລົງວັນທີ 19/11/2008, ເລກທີ003 /ປປທ ລົງວັນທີ 26/12/2012 ແລະ ສະບັບປັບປຸງໃໝ່ລ່າສຸດ ເລກທີ 002/ປປທ ລົງວັນທີ 17/6/2021 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ໄດ້ນິດອັດຕາການເກັບການຫັນປ່ຽນດິນຈາກປະເພດໜຶ່ງໄປປະເພດໜຶ່ງຢ່າງຈະແຈ້ງ (**ຕາຕະລາງ 3 ເອກກະສານຊ້ອມທ້າຍ**) ຂອງລັດຖະບັນຍັດ ລາຍຮັບຈາກແຫລ່ງນີ້ ແມ່ນໄດ້ກຳນົດ 5 ປະເພດຂອງການຫັນປ່ຽນປະເພດທີ່ດິນ ເພດຄື: 1) ການຫັນທີ່ດິນກະສິກຳ (ລວມທັງດິນນາ) ເປັນດິນປຸກສ້າງເພື່ອເປົ້າໝາຍການຄ້າ; 2) ການຫັນທີ່ດິນກະສິກຳເປັນດິນປຸກສ້າງເພື່ອຢູ່ອາໄສສຳລັບຄອບຄົວຖ້າ 800 ຕາແມັດ; 3) ການຫັນທີ່ດິນກະສິກຳ (ດິນນາ)ເປັນດິນປຸກສ້າງຢູ່ອາໄສສຳລັບຄອບຄົວ; 4) ການຫັນດິນປຸກສ້າງເປັນທີ່ດິນກະສິກຳ; 5) ການຫັນທີ່ດິນປ່າໄມ້ທຳມະຊາດເປັນທີ່ດິນປະເພດອື່ນ ໃນ 5 ປະເພດການຫັນປ່ຽນທີ່ດິນ ເຫັນວ່າຍັງບໍ່ມີຂໍ້ມູນຂອງການຈັດເກັບປະເພດທີ 1 ແລະ 5 ສ່ວນປະເພດ 2,3,4 ລັດໄດ້ຈັດເກັບເປັນປົກກະຕິ. ຈາກການສຶກສາປະເພດການຫັນປ່ຽນທີ່ດິນປະເພດທີ 1 ແລະ 5 ແມ່ນຕິດພັນກັບການນຳໃຊ້ດິນໃນຮູບແບບການລົງທຶນ (ສຳປະທານທີ່ດິນ) ຜ່ານມາການຈັດຕັ້ງປະຕິບັດໃນໂຄງການສຳປະທານທຸກໂຄງການ ມີການຫັນປ່ຽນປະເພດດິນ ເປັນຕົ້ນແມ່ນ: ຫັນປ່ຽນດິນກະສິກຳ ມາເປັນດິນທີ່ຢູ່ທີ່ຢູ່ອາໃສເພື່ອທຸລະກິດ, ການຄ້າ ແລະ ຫັນປ່ຽນດິນປ່າໄມ້ ມາເປັນດິນປູກພືດກະສິກຳ, ອຸດສາຫະກຳ, ທຸລະກິດຂຸດຄົ້ນບໍ່ແຮ່ ແລະ ທຸລະກິດສ້າງເຂື່ອນໄຟຟ້າ ... ເລົ່ານີ້ເປັນຕົ້ນ. ແຕ່ບໍ່ມີຂໍ້ມູນໃນການຈັດຕັ້ງປະຕິບັດການຈັດເກັບຫລື ຈັດເກັບໜ້ອຍໃນ 2 ປະເພດການຫັນປ່ຽນດິນໃນປະເພດທີນີ້ ການຫັນປ່ຽນດິນໃນໂຄງການສຳປະທານສ່ວນໃຫ່ຍແມ່ນເກັບແຕ່ຄ່າສຳປະທານ ແລະ ຄ່າຊັບພະຍາກ່ອນ ເທົ່ານັ້ນ.... ທັງທີ່ມີການກຳນົດຈັດເກັບຄ່າທຳນຽມໃນລັດຖະບັນຍັດ 03 ປີ 2008 ເປັນຕົ້ນມາ ແລະ ປັບປຸງລ້າສຸດປີ 2021 ຖ້າເບິ່ງຈາກສະຖິຕິຕົວເລກຂອງການສຳປະທານທີ່ດິນນັບແຕ່ປີ 2008 ແມ່ນຮອດປະຈຸບັນ ຖືວ່າມີຈຳນວນຫລາຍສົມຄວນ ຖ້າຫາກບໍ່ຈັດເກັບການປ່ຽນແປງທີ່ດິນໃນປະເພດ 1 ແລະ 5 ເວົ້າໄດ້ວ່າ: ລັດຖະບານ ເສຍຜົນປະໂຫຍດຈາກລາຍຮັບສ່ວນນີ້ໄປມະຫາສານສົມຄວນ.

ວິທີການເພີ່ມການເກັບລາຍຮັບຈາກການຫັນປ່ຽນປະເພດດິນ.

ເພື່ອເຮັດໃຫ້ລາຍຮັບຈາກແຫລ່ງນີ້ເພີ່ມຂຶ້ນ, ສອດຄ່ອງກັບກົດໝາຍທີ່ດິນປີ 2019 ລັດຖະບານ ຕ້ອງໄດ້ປັບປຸງຄືນ ການກຳນົດການເກັບຈາກການຫັນປ່ຽນທີ່ດິນ ທີ່ນອນໃນ **ມາດຕາ25, ຂໍ້ 4** ຄ່າທຳນຽມການຫັນປ່ຽນທີ່ດິນຈາກປະເພດໜຶ່ງໄປເປັນປະເທດອື່ນ ລັດຖະບັນຍັດ ເລກທີ 002/ປປທ ລົງວັນທີ 17/6/2021 ວ່າດ້ວຍຄ່າ

ທຳນຽມ ແລະ ຄ່າບໍລິການດິນ ໃຫ້ສອດຄ່ອງກັນກົດໝາຍທີ່ດິນ ທີ່ໄດ້ກຳນົດ 8 ປະເພດດິນຢ່າງຈະແຈ້ງ ດັ່ງນັ້ນ, ການກຳນົດການຫັນປ່ຽນປະເພດດິນຄວນກຳນົດໄປຕາມ 8 ປະເພດດິນ (ທັງເປັນການຕິດຕາມການປ່ຽນແປງດິນ) ແລະ ປັບປຸງອັດຕາການຫັນປ່ຽນປະເພດດິນຄືນໃໝ່ໃຫ້ເໝາະສົມ ເປັນຕົ້ນແມ່ນອັດຕາການຫັນປ່ຽນດິນປ່າໄມ້ທຳມະຊາດເປັນດິນປະເພດອື່ນ ເຫັນວ່າອັດຕາເກັບເຂດຊົນນະບົດບໍ່ທັນສອດຄ່ອງກັບສະພາບຄວາມເປັນຈິງ ເນື່ອງປ່າໄມ້ເຂດດັ່ງກ່າວ ແມ່ນເປັນປ່າໄມ້ທຳມະຊາດແທ້ ຄວນເພີ່ມອັດຕາການເກັບຂຶ້ນຕື່ມ ພ້ອມກັນນີ້, ຕ້ອງກວດກາຄືນການເກັບລາຍຮັບຈາກການຫັນປ່ຽນປະເພດດິນຈາກບັນດາໂຄງການສຳປະທານທີ່ໄດ້ຮັບອະນຸມັດຜ່ານມາ ເພາະເຫັນວ່າຫລາຍໂຄງການສຳປະທານທີ່ມີການຫັນປ່ຽນປະເພດດິນບໍ່ທັນມີການຈັດເກັບຈາກປະເພດທີ 1 ແລະ 5 ຜ່ານມາ ນັບແຕ່ປີ 2008 ເປັນຕົ້ນມາ ໂຄງການສຳປະທານໃດໄດ້ເສຍຄ່າຫັນປ່ຽນທີ່ດິນແລ້ວບໍ່? ຖ້າບໍ່ທັນໄດ້ເສຍຄ່າຫັນປ່ຽນປະເພດດິນ ລັດຖະບານຕ້ອງໄດ້ຈັດເກັບຄືນຢ່າງເຂັ້ມງວດ ແລະ ການເກັບລາຍຮັບຈາກແຫລ່ງນີ້ໃຫ້ມີລັກສະນະລວມສູນ ແລະ ພັດທະນາໃຫ້ກ້າວໄປເກັບໃນຮູບແບບທັນສະໄໝຄືກັນກັບການເກັບພາສີທີ່ດິນໃນອະນາຄົດ ເພື່ອບໍ່ໃຫ້ລາຍຮັບຕົກເຮ່ຍ.

 # ລາຍຮັບຈາກຄ່າເຊົ່າ ແລະ ສຳປະທານທີ່ດິນ:

ແມ່ນອີກແຫລ່ງລາຍຮັບໜຶ່ງຈາກທີ່ດິນ ການເກັບລາຍຮັບດັ່ງກ່າວນີ້ ແມ່ນຕິດກັບລັດຖະບັນຍັດ ເລກທີ 02/ປປທ, ລົງວັນທີ 18/11/2009 ວ່າດ້ວຍອັດຕາຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດ ທີ່ໄດ້ກຳນົດອັດຕາເກັບຕາມການສຳປະທານຈຸດປະສົງຂອງການນຳໃຊ້ດິນ.

ວິທີການເພີ່ມການເກັບລາຍຮັບຈາກການເຊົ່າ-ສຳປະທານ.

ຈາກການທົບທວນບັນດານິຕິກຳທີ່ກ່ຽວຂ້ອງເປັນຕົ້ນແມ່ນ ລັດຖະບັນຍັດ ເລກທີ 02/ປປທ, ລົງວັນທີ 18/11/2009 ວ່າດ້ວຍອັດຕາຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດ, ລັດຖະບັນຍັດ ເລກທີ 01/ປປທ ລົງວັນທີ 8/5/2007 ວ່າດ້ວຍພາສີດິນ, ລັດຖະບັນຍັດ ເລກທີ 002/ປປທ ລົງວັນທີ 17/6/2021 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ແລະ ກົດໝາຍທີ່ດິນປີ 2019. ເພື່ອຍົກສູງລາຍຮັບຈາກການເຊົ່າ-ສຳປະທານທີ່ດິນ ຕ້ອງໄດ້ປັບປຸງລັດຖະບັນຍັດ ເລກທີ 02/ປປທ, ລົງວັນທີ 18/11/2009 ວ່າດ້ວຍອັດຕາຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດ ໃຫ້ຕິດພັນກັບການເຊົ່າ-ສຳປະທານ 8 ປະເພດທີ່ດິນ ທີ່ກຳນົດໃນກົດໝາຍທີ່ດິນ 2019 ແລະ ຄວນກຳນົດຈຸດປະສົງ ແລະ ອັດຕາເຊົ່າ-ສຳປະທານຄືນໃຫ້ລະອຽດຊັດເຈນ ພ້ອມນີ້, ຍັງສາມາດເກັບລາຍຮັບເພີ່ມທີ່ນອກເໜືອຈາກຄ່າເຊົ່າ-ສຳປະທານ ເປັນຕົ້ນແມ່ນພາສີທີ່ດິ ທີ່ລັດຈະຕ້ອງໄດ້ຈັດເກັບຕະຫລອດທຸກງານປີໃນໄລຍະສຳປະທານເໝືອກັບດິນປະເພດອື່ນໆທີ່ກຳນົດໄວ້ຕື່ມອີກ. ນອກຈາກນີ້ ດິນທີ່ໄດ້ອະນຸຍາດໃຫ້ເຊົ່າ-ສຳປະທານ ສ່ວນໃຫ່ຍແມ່ນມີການຫັນປ່ຽນປະເພດດິນ ດັ່ງນັ້ນ, ລັດຖະບານຕ້ອງຈັດເກັບຄ່າຫັນປ່ຽນປະເພດດິນທີ່ກຳນົດໄວ້ໃນເຊິ່ງ 2 ການຈັດເກັບດັ່ງກ່າວ ຕ່າງກັບຄ່າສຳປະທານທີ່ດິນ ໂດຍໄດ້ອະທິບາຍຜ່ານມາຂ້າງເທິງລະອຽດສົມຄວນ. ໃນອັດຕາເກັບທີ່ກຳນົດໄວ້ໃນລັດຖະບັນຍັດ ເລກທີ 02/ປປທ ວ່າດ້ວຍອັດຕາຄ່າເຊົ່າ ແລະ ສຳປະທານທີ່ດິນລັດຄວນມີການປັບປຸງບັນດາອັດຕາຄືນບາງປະເພດ ແລະ ຕ້ອງໄດ້ເພີ່ມອັດຕາຄ່າສຳປະທານດິນເພື່ອສ້າງເຂດເສດຖະກິດພິເສດ ທີ່ຍັງບໍ່ທັນມີການກຳນົດຢ່າງຊັດເຈນເທື່ອ **(ເອກະສານຊ້ອນທ້າຍ 4 ແລະ 5)** ແລະ ອີກວິທີໜຶ່ງທີ່ລັດຈະສາມາດເພີ່ມລາຍຮັບຈາກການສຳປະທານຄື: ລັດຕ້ອງຈັດສັນທີ່ດິນສຳປະທານໄວ້ໃຫ້ຢນັກລົງທຶນ ແລະ ເປີດການປະມູນ. ໂດຍທີ່ຜ່ານມາການສຳປະທານທີ່ດິນສ່ວຍຫລາຍນັກລົງທຶນເປັນຜູ້ຊອກຫາດິນ ແລ້ວມາສະເໜີຂໍອະນຸຍາດ ເຮັດໃຫ້ບໍ່ມີການແຂ່ງຂັນດ້ານລາຄາຂອງການສຳປະທານທີ່ດິນດັ່ງກ່າວ ໃນການປັບປຸງລັດຖະບັນຍັດສະບັບນີ້ໃນອະນະຄົດຄວນກຳນົດຄ່າຟື້ນຟູດິນໃນລັດຖະບັນຍັດເຊົ່າ-ສຳປະປະທານຕື່ມ.

 # ລາຍຮັບຈາກຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປັບໄໝກ່ຽວກັບທີ່ດິນ:

ແມ່ນແຫລ່ງລາຍຮັບໜຶ່ງຈາກທີ່ດິນ ການເກັບລາຍຮັບດັ່ງກ່າວນີ້ ແມ່ນຕິດພັນກັບລັດຖະບັນຍັດ ເລກທີ 002/ປປທ ລົງວັນທີ 17/6/2021 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ແລະ ຄຳແນະນຳຂອງລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສະບັບເລກທີ 3662/ກຊສ ລົງວັນທີ 3 ສິງຫາ 2021 ວ່າດ້ວຍການເກັບຄ່າທຳນຽມ ແລະ ຄ່າບໍລິການຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຖືວ່າເປັນອີກແຫລ່ງລາຍຮັບໜຶ່ງທີ່ເປັນທ່າແຮງ ເຊິ່ງໄດ້ຈາກຄ່າທຳນຽມ ແລະ ຄ່າບໍລິການດ້ານຕ່າງໆກ່ຽວກັບທີ່ດິນຄື:1) ຄ່າທຳນຽມຂຶ້ນທະບຽນອອກໃບຕາດິນ; 2)ຄ່າທຳນຽມຈົດທະບຽນປ່ຽນແປງສິດນຳໃຊ້ທີ່ດິນ ;3) ຄ່າທຳນຽມຈົດທະບຽນການເຄື່ອນໄຫວສິດນຳໃຊ້ທີ່ດິນ; 4) ຄ່າທຳນຽມອອກໃບຢັ້ງຢືນຕ່າງໆກ່ຽວກັບດິນ;5) ຄ່າວັດແທກດິນ; 6) ຄ່າປັບໄໝມຕ່າງໆ ..... ແລະ ຄ່າທຳນຽມ, ຄ່າບໍລິການຕ່າງໆ ທີ່ໄດ້ລະບຸລະອຽດໃນລັດຖະບັນຍັດ ຜ່ານມາແມ່ນຍັງບໍ່ທັນລວມສູນທັງໝົດ ຂຶ້ນກັບຂະແໜງການທີ່ມີບົດບາດກ່ຽວຂ້ອງກັບການນຳໃຊ້ດິນ ເປັນຕົ້ນຄ່າປັບໄໝໃນການຖົມດິນກ່ອນໄດ້ຮັບອະນຸຍາດ ຈາກຂໍ້ມູນເຫັນວ່າຂະແໜງກະສິກຳເປັນຜູ້ຈັດຕັ້ງປະຕິບັດ ແຕຍັງບໍ່ມີຈຳນວນຕົວເລກມອບເຂົ້າງົບປະມານ.

ເພື່ອຮັບປະກັນໃຫ້ການເກັບມີປະສິດທິພາບ ລັດຖະບານຈະຕ້ອງຫັນການເກັບໃຫ້ເປັນລັກສະນະລວມສູນ ແລະ ກ້າວໄປເຖິງການເກັບຮູບແບບທັນສະໄຫມຄືກັນກັບການເກັບພາສີທີ່ດິນ.

- **ຕົວຢ່າງຂອງການເກັບລາຍຮັບຈາກການຫັນປ່ຽນທີ່ດິນປະເພດໜຶ່ງໄປເປັນປະເພດອື່ນ (ເພື່ອຊ່ອງແສງໃຫ້ເຫັນລາຍຮັບ).**

ຕົວຢ່າງ1: ລາຍຮັບຈາກການຫັນປ່ຽນດິນປະເພດໜຶ່ງໄປເປັນປະເພດອື່ນໃນ 1,000 ເຮັກຕາ

ກໍລະນີທີ 1: ຫັນປ່ຽນປະເພດທີ່ດິນກະສິກຳເປັນ ດິນປຸກສ້າງເຂດພັດທະນາ, ເຂດອຸດສາຫະກຳ, ເຂດເສດຖະກິດພິເສດ....ຕ່າງໆ.

- ເຂດຕົວເມືອງ 1,000 ເຮັກຕາ = 10,000,000ຕາແມັດ X 2,000 ກີບ=20,000,000,000 ກີບ
- ເຂດຊານເມືອງ 1,000 ເຮັກຕາ = 10,000,000ຕາແມັດ X 1,000 ກີບ=10,000,000,000 ກີບ
- ເຂດຊົນນະບົດ 1,000 ເຮັກຕາ = 10,000,000ຕາແມັດ X 500 ກີບ=5,000,000,000 ກີບ

ກໍລະນີທີ 2: ຫັນປ່ຽນທີ່ດິນປ່າໄມ້ ໄປປູກໄມ້ອຸດສາຫະກຳ ຢາງພາລາ; ໄມ້ສັກ, ກ້ວຍ, ອ້ອຍ....

- ເຂດຕົວເມືອງ 1,000 ເຮັກຕາ = 10,000,000ຕາແມັດ X 25,000 ກີບ=250,000,000,000 ກີບ
- ເຂດຊານເມືອງ 1,000 ເຮັກຕາ = 10,000,000ຕາແມັດ X 20,000 ກີບ=200,000,000,000 ກີບ
- ເຂດຊົນນະບົດ 1,000 ເຮັກຕາ = 10,000,000ຕາແມັດ X 15,000 ກີບ=150,000,000,000 ກີບ

ຕົວຢ່າງ 2: ການສຳປະທານດິນ 1,000 ເຮັກຕາ

ກໍລະນີທີ 1: ສຳປະທານທີ່ດິນ ເຂົ້າໃນທຸລະກິດບໍລິການ, ເຂດເສດຖະກິດພິເສດ....

- ພາສີທີ່ດິນ 1,000 ເຮັກຕາ=10,000,000 ຕາເມັດ×300 ກີບ= 3,000,000,000ກີບ/ປີ
- ຄ່າຫັນປ່ຽນປະເພດດິນ 1,000 ເຮັກຕາ=10,000,000 ຕາເມັດ×2,000 ກີບ= 20,000,000,000ກີບ
- ຄ່າສຳປະທານ =1,000 ເຮັກຕາ × 5,000 ໂດລາ = 5,000,000 ໂດລາ/ປີ

ກໍລະນີທີ 2: ສຳປະທານທີ່ດິນປຸກຢາພາລາ

- ພາສີທີ່ດິນ 1,000 ເຮັກຕາ×20,000 ກີບ= 20,000,000ກີບ/ປີ
- ຄ່າຫັນປ່ຽນປະເພດດິນ 1,000ເຮັກຕາ=10,000,000 ຕາເມັດ×15,0000 ກີບ= 150,000,000,000ກີບ

- ຄ່າສຳປະທານ =1,000 ເຮັກຕາ × 50 ໂກລາ = 50,000 ໂກລາ/ປີ

3. ຂໍ້ສະເໜີແນະດ້ານນະ�โยบายต่ๆ ขะแขงการพากลัดที่ปิดบาดในวงกางานที่ดิน.

ຈາກຜົນຂອງການສຶກສາຂ້າງເທິ່ງ ຈຶ່ງມີຂໍ້ສະເໜີດ້ານນະ�โยบาย ເພື່ອໃຫ້ພາກສ່ວນກ່ຽວຂ້ອງພິຈາລະນາປັບປຸງ ດັ່ງນີ້:

1. ປັບປຸງຄືນລັດຖະບັນຍັດເລກທີ 01/ປປທ ລົງວັນທີ 8/5/2007 ວ່າພາສີດິນ, ລັດຖະບັນຍັດ ເລກທີ 02/ ປປທ, ລົງວັນທີ 18/11/2009 ວ່າດ້ວຍອັດຕາຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດ, ເພື່ອກຳນົດເປົ້າໝ າຍການຈັດເກັບໃຫ້ສອດຄ່ອງ, ລ່ວງລຽ່ນກັບນິຕິກຳ ແລະ ບັນດາກົດໝາຍທີ່ພົວພັນກັບການຈັດເກັບລາຍຮັບ ຈາກທີ່ດິນ ພ້ອມທັງກຳນົດບົດບາດໜ້າທີ່ຂອງຂະແໜງການທີ່ມີສ່ວນພົວພັນໃນການຈັດເກັບລາຍຮັບໃຫ້ ຈະແຈ້ງ ແລະ ຄວນປະກອບມີຜູ້ຕ່າງໜ້າຈາກຫລາຍພາກສ່ວນເຂົ້າຮ່ວມໃນປັບປຸງນິຕິກຳດັ່ງກ່າວ.
2. ຍົກສູງ ແລະ ປັບປຸງຖານຂໍ້ມູນທີ່ໃຊ້ເຂົ້າໃນການຈັດເກັບນລາຍຮັບ ລະຫວ່າງຂະແໜງການກັບຂະແໜງການ ໃຫ້ສອດຄ່ອງ ແລະ ສົມດູນກັນໃນແຕ່ລະໄລຍະ.
3. ກວດກາຄືນບັນດາໂຄງ ການສຳປະທານທີ່ໄດ້ຮັບອະນຸມັດ ແລະ ຫັນປ່ຽນດິນ ທີ່ຍັງບໍ່ທັນໄດ້ເສຍຄ່າຕ່າງໆທີ່ ຕິດພັນກັບແຕ່ລະນິຕິກຳຄືນ ແລະ ດຳເນີນການເກັບຄືນບັນດາລາຍຮັບດັ່ງກ່າວ.
4. ຕ້ອງໄດ້ປັບປຸງຄືນບັນດາໜ່ວຍງານທີ່ດິນບ້ານໃຫ້ມີຄວາມເຂັ້ມແຂງ, ເພື່ອສະໜອງຂໍ້ມູນ, ສະຖິຕິຕົວເລກ ກ່ຽວກັບທີ່ດິນ, ຂໍ້ມູນການປ່ຽນແປງດິນ ແລະ ຈັດເກັບບັນດາລາຍຮັບທີ່ຍັງບໍ່ສາມາດຈັດເກັບໃນລະບົບທັນ ສະໄຫມໄດ້ໃນໄລນະປະຈຸບັນ ເພື່ອເຮັດໃຫ້ງົບປະມານຕົກເຮ່ຍໜ້ອຍທີ່ສຸດ.
5. ລັດຖະບານຈະຕ້ອງຊອກແຫລ່ງລາຍຮັບໃຫ່ມຕື່ມອີກ ເປັນຕົ້ນແມ່ນລາຍຮັບຈາກການຫັນທີ່ດິນເປັນທຶນ ໂດຍລັດຕ້ອງໄດ້ສຶກສາ, ທົບທວນໃນຫລາຍຮູບແບບຂອງການຫັນ ໂດຍຕ້ອງໄດ້ຈັດຕັ້ງເຮັດທົດລອງເປັນກໍ ລະນີໄປ. ການຫັນທີ່ດິນເປັນທຶນໃນກໍລະນີທີ່ໄດ້ຮັບຜົນດີໃນປະຈຸບັນນີ້ ແມ່ນຮູບແບບພັດທະນາດິນ ແລະ ຂາຍກຳມະສິດ (ພັດທະນາດິນ ແລ້ວຂາຍກຳມະສິດໃຫ້ປະຊາຊົນລາວ) ພາກເອກະກະຊົນໄດ້ດຳເນີນໃນຮູບ ແບບດິນແບ່ງຂາຍ ແລະ ແຜ່ຫລາຍ. ເຊິ່ງລັດສາມາດທົດລອງຈັດຕັ້ງປະຕິບັດໄດ້ເປັນກໍລະນີໄປ ເປັນຕົ້ນ ແມ່ນເຂດຕັ້ງເມືອງໃໝ່ ທີ່ລັດສາມາດເຮັດໄດ້ ໂດຍການພັດທະນາດິນເປັນອັນລະອຽດຕາມຝັງເມືອງໃໝ່ ແລະ ຂາຍກຳມະສິດໃຫ້ພະນັກງານ, ທະຫານ, ຕຳຫລວດ ແລະ ປະຊາຊົນ (ລາວ). ລັດກໍ່ສາມາດສ້າງລາຍ ຮັບ, ຈັດສັນຄວາມເປັນລະບຽບຂອງຝັງເມືອງ, ອອກໃບຕາດິນ ແລະ ເກັບກຳເຂົ້າໃນຖານຂໍ້ມູນການຈັດເກັບ ພາສີທີ່ດິນ (ແຕ່ຂໍ້ສະເໜີແນະນີ້ ຈະຕ້ອງໄດ້ຮັບການສຶກສາຄົ້ນຄວ້າໃຫ້ລະອຽດຄັກແນ່ກ່ອນການຈັດຕັ້ງ ປະຕິບັດ).

ເອກະສານອ້າງອີງ.

1. ກົດໝາຍສະພາແຫ່ງຊາດສະບັບປັບປຸງ 2016
2. ກົດໝາຍວ່າດ້ວຍລັດຖະບານ 2017
3. ກົດໝາຍວ່າດ້ວຍທີ່ດິນ (1997, 2003 ແລະ 2019)
4. ກົດໝາຍວ່າດ້ວຍກະສິກຳ 1998
5. ກົດໝາຍປ່າໄມ້ 2019
6. ກົດໝາຍວ່າດ້ວຍຜັງເມືອງ 2018
7. ກົດໝາຍສົ່ງເສີມການລົງທຶນ 2017
8. ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ 2016.
   - **ມະຕິ ແລະ ນິຕິກຳລຸ່ມກົດໝາຍທີ່ພົວພັນກັບການຄຸ້ມຄອງ ແລະ ການນຳໃຊ້ທີ່ດິນ**
9. ມະຕະຂອງຄະນະບໍລິຫານງານສູນການພັກ ວ່າດ້ວຍການເພີ່ມທະວີວຽກງານການຄຸມຄອງ ແລະ ພັດທະນາທີ່ດິນໃນໄລຍະໃຫ່ມ ເລກທີ 026/ຄບສພ ລົງວັນທີ 03/08/2017.
10. ລັດຖະບັນຍັດຂອງປະທານປະເທດ ເລກທີ 01/ສປປ ວ່າດ້ວຍພາສີທີ່ດິນເລກທີ ລົງວັນທີ 8/5/2007;
11. ລັດຖະບັນຍັດຂອງປະທານປະເທດເລກທີ(03/ປປທ2008; 003/ປປທ2012; 002/ປປທ2021) ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ
12. ລັດຖະບັນຍັດຂອງປະທານປະເທດ ເລກທີ 02/ ປປທ ວ່າດ້ວຍອັດຕາຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງ ລັດ, ລົງວັນທີ 18 ພະຈິກ 2009
13. ດຳລັດສະບັບເລກທີ (145/ນຍ 2017, ສະບັບປັບປຸງ 451/ນຍ 2019) ວ່າດ້ວຍການເຄື່ອນໄຫວ ແລະ ພາລະບົດບາດຂອງກະຊວງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ
14. ດຳລັດສະບັບເລກທີ 99/ນຍ ລົງວັນທີ 9/3/2017ວ່າດ້ວຍການເຄື່ອນໄຫວ ແລະ ພາລະບົດບາດຂອງກະຊວງ ກະສິກຳ ແລະ ປ່າໄມ້;
15. ດຳລັດສະບັບເລກທີ 522/ນຍ ລົງວັນທີ 23/12/2011ວ່າດ້ວຍການເຄື່ອນໄຫວ ແລະ ພາລະບົດບາດຂອງ ກະຊວງອຸສາຫະກຳ-ການຄ້າ;
16. ດຳລັດສະບັບເລກທີ 296/ນຍ ລົງວັນທີ4/9/2017ວ່າດ້ວຍການເຄື່ອນໄຫວ ແລະ ພາລະບົດບາດຂອງ ກະຊວງພະລັງງານ-ບໍ່ແຮ່;
17. ດຳລັດສະບັບເລກທີ 201/ນຍ ລົງວັນທີ 30/6/2017ວ່າດ້ວຍການເຄື່ອນໄຫວ ແລະ ພາລະບົດບາດຂອງ ກະຊວງແຜນການ-ການລົງທຶນ;
18. ດຳລັດສະບັບເລກທີ 295/ນຍ ລົງວັນທີ 4/9/2017ວ່າດ້ວຍການເຄື່ອນໄຫວ ແລະ ພາລະບົດບາດຂອງກະ ຊວງໂຍທາທິການ-ຂົນສົ່ງ;
19. ດຳລັດສະບັບເລກທີ 396/ນຍ ລົງວັນທີ 2/11/2011ວ່າດ້ວຍການເຄື່ອນໄຫວ ແລະ ພາລະບົດບາດຂອງ ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ;
20. ດຳລັດວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເລກທີ 05/ນຍ ລົງວັນ 5/1/2018
21. ດຳລັດເລກທີ 84/ນຍ ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ຈັດສັນໂຍກຍ້າຍປະຊາຊົນ ຈາກໂຄງການ ພັດທະນາ ລົງວັນທີ 5/4/2016
22. ດຳລັດ ສະບັບເລກທີ 135/ນຍ ວ່າດ້ວຍການເອົາທີ່ດິນຂອງລັດໃຫ້ເຊົ່າ ຫລື ສຳປະທານ ລົງວັນທີ 25 ພຶດສະພາ 2009

23. ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ 2018..
24. ຂໍ້ຕົກລົງຂອງລັດຖະມົນຕີກະຊວງແຜນການ-ການລົງທຶນ ເລກທີ 2735/ກຜທ ລົງວັນທີ 2/11/2018 ว่าด้วยการวางเงินค้ำประกันสำลับกิดจะการสำปะทาน.
25. ບົດແນະນຳຂອງລັດຖະມົນຕີກະຊວງແຜນການ-ການລົງທຶນ ເລກທີ 0457/ກຜທ ລົງວັນທີ27/2/2019 ການຄຸ້ມຄອງທີ່ດິນໃຫ້ເຊົ່າ ຫລື ສຳປະທານ ສຳລັບການປູກພືດກະສິກຳ.
26. ບົດແນະນຳຂອງລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເລກທີ 6036/ກຊສ ລົງ ວັນທີ 27/8/2014 ว่าด้วยการขึ้นทะบรรนดิน ແລະ ການອອກໃບຕາດິນ.

ตาตะลาง1: ເອກະສານຊ້ອນທ້າຍ.1. ດິນກະສິກຳ(ລັດຖະບັນຍັດຂອງປະທານປະເທດ ເລກທີ 01/ສປປ ว่าด้วยพาสีที่ดินเลกที ลิงวันที 8/5/2007)

ເຂດເສຍພາສີດິນກະສິກຳ	ອັດຕາຄ່າເສຍພາສີທີ່ດິນຄິດໄລ່ເປັນເງິນ (ກີບ/ເຮັກຕາ/ປີ)					
	ເຂດທົ່ງພຽງ		ເຂດພູພຽງ		ເຂດພູດອຍ	
	ເຂດຕົວເມືອງ	ເຂດຊົນນະບົດ	ເຂດຕົວເມືອງ	ເຂດຊົນນະບົດ	ເຂດຕົວເມືອງ	ເຂດຊົນນະບົດ
I.ທີ່ດິນນາ:						
1. ດິນນາເຜະລິດເຂົ້າ	45,000	35,000	40,000	30,000	25,000	20,000
2. ດິນນາຖືກໄພທຳມະຊາດ ທຳລາຍ:						
2.1.ເສຍຫາຍສູງກ່ວາ 70%ຂຶ້ນໄປ(ຍົກເວັ້ນທັງໝົດໃນປີນັ້ນ)						
2.2ເສຍຫາຍຕ່ຳກ່ວາ 70%-50%	.....	.....	.....	.....	.....	.....
2.3.ເສຍຫາຍຕ່ຳກ່ວາ50%ລົງມາ	10,000	5,000	9,000	5,000	5,000	5,000
3. ດິນນາປະເຮື້ອ	20,000	10,000	10,000	10,000	8,000	8,000
II.ທີ່ດິນໄຮ່	30,000	20,000	20,000	15,000	20,000	10,000
1.ໄຮ່ຄົງທີ່.						
2.ໄຮ່ໝຸນວຽນ	20,000	15,000	16,000	14,000	14,000	12,000
III.ດິນສວນ.	25,000	20,000	25,000	15,000	20,000	15,000
1.ປູກດອກໄມ້						
2.ປູກໄມ້ກິນໝາກ	12,000	9,000	11,000	10,000	10,000	10,000
3.ປູກພືດອຸດສາຫະກຳ ແລະ ພືດລົ້ມລຸກ	30,000	20,000	20,000	10,000	15,000	8,000
4.ປູກພືດເຮັດຢາປົວພະຍາດ.	45,000	35,000	40,000	30,000	30,000	20,000
5.ປູກຜັກທຸກສະນິດ.	20,000					

6.ປູກໄມ້ທຸກສະນິດ.	30,000	10,000	15,000	8,000	10,000	6,000
IV.ເນື້ອທີ່ລ້ຽງສັດ	25,000	20,000	25,000	15,000	12,000	8,000
1.ທົ່ງຫຍ້າທຳມະຊາດລ້ຽງສັດ		15,000	20,000	10,000	12,000	8,000
2.ທົ່ງຫຍ້າທຳມະຊາດໄດ້ບຸກເບີກ	35,000					
3.ຟາມລ້ຽງສັດ	35,000	20,000	30,000	15,000	20,000	12,000
4.ໜອງ,ສະລ້ຽງສັດນ້ຳ	45,000	10,000	25,000	8,000	16,000	6,000
V.ດິນກະສິກຳອື່ນໆ.	40,000	35,000	40,000	30,000	30,000	20,000
1.ທົ່ງຫຍ້າບໍ່ໄດ້ລ້ຽງສັດ		30,000	35,000	25,000	30,000	20,000
2.ທີ່ດິນກະສິກຳອື່ນໆທີ່ບໍ່ໄດ້ນຳໃຊ້	40,000					
	40,000	30,000	35,000	25,000	30,000	20,000
		30,000	35,000	25,000	30,000	20,000

ຕາຕະລາງ2: ເອກະສານຊ້ອນທ້າຍ 2. ທີ່ດິນປຸກສ້າງ (ລັດຖະບັນຍັດຂອງປະທານປະເທດ ເລກທີ 01/ສປປ ว่า ด้ວຍພາສີທີ່ດິນເລກທີ ລົງວັນທີ 8/5/2007)

ເຂດເສຍພາສີທີ່ດິນປຸກສ້າງ	ອັດຕາການເສຍພາສີທີ່ດິນເປັນ (ກີບ/ຕາແມັດ/ປີ)			
	ດິນທີ່ຢູ່ອາໃສ	ທີ່ດິນປຸກໂຮງງານ ຫລືເຂດອຸດສາຫະກຳ	ທີ່ດິນປຸກສ້າງຮ້ານຄ້າ ແລະ ສະຖານທີ່ບໍລິການ	ທີ່ດິເປົ່າຫວ່າງ (ທີ່ດິນບໍ່ພັດທະນາ)
I.ຕົວເມືອງຂຶ້ນກັບນະຄອນຫລວງ.				
1.ເຂດໃຈກາງຕົວເມືອງ	80	180	300	300
2.ເຂດອ້ອມໃຈກາງຕົວເມືອງ	60	150	240	240
3.ເຂດຊານເມືອງ	40	80	180	180
4.ເຂດຂະຫຍາຍຕົວເມືອງ	30	60	100	100
II.ຕົວເມືອງທີ່ຂຶ້ນກັບແຂວງ				
1.ເຂດໃຈກາງຕົວເມືອງ	60	160	250	250
2.ເຂດອ້ອມໃຈກາງຕົວເມືອງ	50	120	200	200
3.ເຂດຊານເມືອງ	30	60	180	180
4.ເຂດຂະຫຍາຍຕົວເມືອງ	20	40	80	80
III.ຕົວເມືອງທີ່ຂຶ້ນກັບປົກຄອງເມືອງ ຫລື ເທດສະບານເມືອງ				
1.ເຂດໃຈກາງຕົວເມືອ	25	60	120	120

2.ເຂດຂະຫຍາຍຕົວເມືອງ	20	30	60	60
IV.ເຂດຊົນນະບົດ				
1.ບ້ານຕ່າງໆໃນເຂດທົ່ງພຽງ	15	20	30	45
2.ບ້ານຕ່າງໆໃນເຂດພູພຽງ	10	15	25	30
3.ບ້ານຕ່າງໆໃນເຂດພູດອຍ	5	5	15	15

ຕາຕະລາງ3: ເອກະສານຊ້ອມທ້າຍ: **ມາດຕາ25, ຂໍ້ 4** ຄ່າທຳນຽມການຫັນປ່ຽນທີ່ດິນຈາກປະເພດໜຶ່ງໄປເປັນປະເພດອື່ນ ລັດຖະບັນຍັດ ເລກທີ 002/ປປທ ລົງວັນທີ 17/6/2021 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ

ລ/ດ	ເນື້ອໃນລາຍການ	ອັດຕາ(ກີບ/ຕາແມັດ)		
		ເຂດຕົວເມືອງ	ເຂດຊານເມືອງ	ເຂດຊົນນະບົດ
1	ການຫັນທີ່ດິນກະສິກຳ (ລວມທັງດິນນາ)ເປັນດິນປຸກສ້າງເພື່ອເປົ້າໝາຍການຄ້າ	2,000	1,000	500
2	ການຫັນທີ່ດິນກະສິກຳເປັນດິນປຸກສ້າງເພື່ອຢູ່ອາໄສ ສຳລັບຄອບຄົວຖ້າ800ຕາແມັດ	100	50	30
3	ການຫັນທີ່ດິນກະສິກຳ (ດິນນາ)ເປັນດິນປຸກສ້າງຢູ່ອາໄສ ສຳລັບຄອບຄົວ	100	50	30
4	ການຫັນດິນປຸກສ້າງເປັນທີ່ດິນກະສິກຳ	5	3	2
5	ການຫັນທີ່ດິນປ່າໄມ້ທຳມະຊາດເປັນທີ່ດິນປະເພດອື່ນ	25,000	20,000	15,000

ເອກະສານຊ້ອນທ້າຍ4; ມາດຕາ8: ອັດຕາຄ່າເຊົ່າທີ່ດິນຂອງລັດເພື່ອກໍ່ສ້າງກິດຈະການ ການບໍລິການ ແລະ ທີ່ຢູ່ອາໄສ ລັດຖະບັນຍັດ 02/ປປທ ລົງວັນທີ 18/11/2009 ວ່າດ້ວຍອັດຕາເຊົ່າ ແລະຄ່າສຳປະທານດິນລັດ.

ລ/ດ	ເປົ້າໝາຍການເຊົ່າທີ່ດິນລັດ	ອັດຕາຄ່າເຊົ່າດິນ/ເຮັກຕາ/ປີ ຫົວໜ່ວຍເປັນໂດລາ		
		ເຂດ1	ເຂດ2	ເຂດ3
1	ກິດຈະການການບໍລິການທີ່ມີລັກສະນະເພື່ອສາທາລະນະປະໂຫຍດເຊັ່ນ: ສວນສາທາລະນະ, ໂຮງຮຽນ, ໂຮງໝໍ, ສະໜາມເດັກຫລິ້ນ ແລະ ສູນຟື້ນຟູສຸຂະພາບ	100	300	500
2	ປຸກສ້າງເຮືອນ ແລະ ອາຄານເພື່ອເປັນບ່ອນຢູ່ອາໄສ	300	500	1,000
3	ກິດຈະການບໍລິການທີ່ມີລັກສະນະສ່ວນບຸກຄົນເຊັ່ນ: ທະນາຄານ, ຮ້ານຊັບພະສິນຄ້າ	500	10,000	50,000

4	ກິດຈະການກໍ່ສ້າງບ້ານຈັດສັນ, ເຮືອນພັກ, ຮ້ານອາຫານ,ພັດທະຄານ,ສູນປະຊຸມ,ຫ້ອງການ	1,000	5,000	10,000
5	ກິດຈະການພັດທະນາໂຄງລ່າງເຊັ່ນ:ໂທລະຄົມມະນາຄົມ, ຕະຫລາດ, ສະຖານີຈອດລົດຜູ້ໂດຍສານ, ສະຖານີຂົນສົ່ງສິນຄ້າ ແລະ ລະບົບສາງສິນຄ້າ	3,000	5,000	10,000
6	ກິດຈະການບໍລິການທີ່ມີລັດສະນະສ່ວນບຸກຄົນເຊັ່ນ: ໂຮງແຮມ, ລີສອດ, ສະຖານທີ່ບັນເທີງ	5,000	30,000	70,000

ຕາຕະລາງ5: ເອກະສານຊ້ອນທ້າຍ ມາດຕາ11: ອັດຕາຄ່າສຳປະທານທີ່ດິນລັດເພື່ອກິດຈະກຳປູກໄມ້ ລັດຖະບັນຍັດ 02/ປປທ ລົງວັນທີ 18/11/2009 ວ່າດ້ວຍອັດຕາເຊົ່າ ແລະຄ່າສຳປະທານດິນລັດ.

ລ/ດ	ເປົ້າໝາຍຂອງການສຳປະທານດິນລັດ	ອັດຕາຄ່າສຳປະທານທີ່ດິນ/ເຮັກຕາ/ປີເປັນຫົວໜ່ວຍໂດລາ		
		ເຂດ1	ເຂດ2	ເຂດ3
1	ກິດຈະກຳປູກໄມ້ເສດຖະກິດ10ປີຂຶ້ນໄປ	8	15	25
2	ກິດຈະກຳປູກໄມ້ໃຫ່ຍໄວ10ປີລົງມາ	10	20	30
3	ກິດຈະກຳປູກຢາງພາລາ	30	40	50

ເອກະສານຊ້ອນທ້າຍ 6: ຕາຕະລາງສະຖິຕິສໍາມະໂນທີ່ດິນສົກ 2019

ລ/ດ	ຊື່ແຂວງ/ນະຄອນຫຼວງ	ເມືອງ	ບ້ານ	ດິນລັດ ແລະ ລວມໝູ່		ດິນປຸກສ້າງ		ດິນກະສິກໍາ		ລວມທັງໝົດ		ໝາຍເຫດ
				ຈ/ນ ຕອນ	ເນື້ອທີ່ (ຕມ)	ຈ/ນ ຕອນ	ເນື້ອທີ່ (ຕມ)	ຈ/ນ ຕອນ	ເນື້ອທີ່ (ຕມ)	ຈ/ນ ຕອນ	ເນື້ອທີ່ (ຕມ)	
1	ນະຄອນຫຼວງວຽງຈັນ	9	418	19,766	52,748,903	145,668	130,958,658	117,083	1,182,543,973	282,517	1,366,251,534	ຂໍ້ມູນປີ2016
2	ຜົ້ງສາລີ	7	521	526	1,207,844	18,081	5,319,240	31,342	136,668,701	49,949	143,195,785	ຂໍ້ມູນປີ2016
3	ຫຼວງນ້ໍາທາ	5	273	6,483	119,092,152	22,776	7,964,473	30,372	162,261,936	59,631	289,318,561	ຂໍ້ມູນປີ2016
4	ອຸດົມໄຊ	7	279	737	11,800,207	27,601	10,877,200	64,297	522,839,200	92,635	545,516,607	ຂໍ້ມູນປີ2018
5	ບໍ່ແກ້ວ	5	265	846	1,816,471	28,509	19,349,985	26,147	149,284,776	55,502	170,451,232	ດິນລັດຂໍ້ມູນປີ2016
6	ຫຼວງພະບາງ	12	754	6,817	9,745,462	108,599	83,079,909	155,277	14,142,876,031	270,693	14,235,701,402	ຂໍ້ມູນປີ2020
7	ຫົວພັນ	10	718	867	160,964,757	40,914	9,455,979	61,100	51,228,589	102,881	221,649,325	ຂໍ້ມູນປີ2020
8	ໄຊຍະບູລີ	11	431	2,844	423,102,639	83,803	54,214,665	213,076	1,983,535,800	299,723	2,460,853,104	ຂໍ້ມູນປີ2020
9	ຊຽງຂວາງ	7	478	1,364	253,116,148	43,198	53,463,716	69,909	327,889,458	114,471	634,469,322	ຂໍ້ມູນປີ2020
10	ວຽງຈັນ	11	434	3,549	45,378,988	74,023	48,259,863	114,687	1,383,624,486	192,259	1,477,263,337	ຂໍ້ມູນປີ2020
11	ບໍລິຄໍາໄຊ	7	288	1,319	11,095,039.00	46,979	65,941,230	53,139	808,869,054	101,437	885,905,323	ຂໍ້ມູນປີ2020
12	ຄໍາມ່ວນ	10	559	3,150	96,197,388	70,912	81,710,115	90,024	1,169,298,504	164,086	1,347,206,334	ຂໍ້ມູນປີ2020
13	ສະຫວັນນະເຂດ	15	1,022	8,041	58,177,027	185,051	199,507,652	305,858	4,395,283,504	498,950	4,652,968,183	ຂໍ້ມູນປີ2020
14	ສາລະວັນ	8	613	857	16,887,033	147,148	606,770,423	83,852	1,272,990,599	231,857	1,896,648,055	ດິນລັດຂໍ້ມູນປີ2016
15	ເຊກອງ	4	82	3,919	1,602,665,271	15,583	14,896,206	16,924	210,932,956	36,426	1,828,494,433	ປີ2016
16	ຈໍາປາສັກ	10	643	46,287	44,430,764	156,034	88,216,257	159,444	1,615,610,000	361,765	1,748,257,021	ປີ2016
17	ອັດຕະປື	5	146	826	406,864,179	26,579	28,205,919	27,716	276,895,952	55,121	711,966,050	ປີ2018
18	ໄຊສົມບູນ	5	88	171	7,129,243	12,246	263,642,214	18,312	2,277,047,736	30,729	2,547,819,193	ດິນລັດຂໍ້ມູນປີ2016
ລວມ 18 ແຂວງ		**148**	**8,012**	**108,369**	**3,322,419,515**	**1,253,704**	**1,771,833,704**	**1,638,559**	**32,069,681,255**	**3,000,632**	**37,163,934,801**	